BANK OF THE LAO PDR
ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110

# ທ່ານ ຜູ້ວ່າການ ທຫລ ຕ້ອນຮັບແຂກເຂົ້າຢ້ຽມຂໍ່ານັບຜູ້ຕາງໜ້າອົງການ ອົງການສະຫະປະຊາຊາດ ປະຈຳ ສປປ ລາວ



ໃນຕອນເຊົ້າຂອງວັນທີ 24 ພຶດສະພາ 2023 ທີ່ທະນາຄານແຫ່ງ ສປປ ລາວ, ທ່ານ ບຸນເຫຼືອ ສິນໄຊວໍຣະວົງ ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ພ້ອມດ້ວຍຄະນະກົມພາຍໃນ ທຫລ ໄດ້ໃຫ້ກຽດຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ທ່ານ ນ. Sara Sekkenes, ຜູ້ຕາງໜ້າອົງການ ອົງການສະຫະປະຊາຊາດ ປະຈຳ ສປປ ລາວ (UN Resident Coordinator) ພ້ອມດ້ວຍຄະນະ.

ຈຸດປະສົງຂອງການພົບປະຄັ້ງນີ້ ແມ່ນເພື່ອກ່າວອຳລາ ເນື່ອງໃນໂອກາດທີ່ ທ່ານ ນ. Sara Sekkenes ໃກ້ຈະສິ້ນສຸດວາລະການດຳລົງຕຳແໜ່ງຢູ່ ສປປ ລາວ. ໃນໂອກາດດຽວກັນນີ້ ທ່ານ ນ. Sara Sekkenes ກໍ່ໄດ້ລາຍງານສະພາບການປະຕິບັດໜ້າທີ່ຂອງຕົນຢູ່ ສປປ ລາວ ຫຼາຍກວ່າ 4 ປີຜ່ານມາ ແລະ ສະແດງຄວາມຂອບໃຈຕໍ່ຄວາມໄວ້ເນື້ອເຊື່ອໃຈ ແລະ ການໃຫ້ຄວາມຮ່ວມມືທີ່ດີໃນໄລຍະທີ່ດຳລົງຕຳແໜ່ງຢູ່ ສປປ ລາວ. ພ້ອມນີ້, ທ່ານ ຜູ້ວ່າການ ທຫລ ກໍ່ໄດ້ກ່າວຍ້ອງຍໍຊົມເຊີຍຕໍ່ການປະຕິບັດໜ້າທີ່ວຽກງານທີ່ມີຜົນສຳເລັດ ແລະ ອວຍພອນໃຫ້ທ່ານມີຜົນສຳເລັດໃນໜ້າທີ່ໃໝ່.

ຂ່າວ: ກົມຮ່ວມມືສາກົນ

ພາບ: ທິດສະບາ ທຳມະວົງສິງ

## ເສດຖະກິດລາວຈະເຂັ້ມແຂງຖ້າປວງຊົນລາວຮ່ວມແຮງນຳໃຊ້ເງິນກີບ